ໜ່ວຍຊາວໜຸ່ມ ພວຕ ແຂວງບໍ່ແກ້ວ ຈັດພິທີມອບ-ຮັບຄະນະເລຂາໜ່ວຍຊຸດໃໝ່
Written by Administrator
Thursday, 07 February 2019 01:44 - Last Updated Thursday, 07 February 2019 02:27
ໜ່ວຍຊາວໜຸ່ມພະແນກ ວິທະຍາສາດ ແລະ ເຕັກໂນໂລຊີ ແຂວງບໍ່ແກ້ວ ໄດ້ຈັດພິທີມອບ-ຮັບ
ຄະນະໜ່ວຍຊາວໜຸ່ມຊຸດໃໝ່

ພິທີດັ່ງກ່າວໄດ້ຈັດຂຶ້ນໃນເຊົ້າ ຂອງວັນທີ 6 ພຶດສະພາ 2019 ຢູ່ທີ່ຫ້ອງປະຊຸມ ຂອງພະແນກ
ວິທະຍາສາດ ແລະ ເຕັກໂນໂລຊີແຂວງ ໂດຍເຂົ້າຮ່ວມເປັນປະທານ ຂອງ ສະຫາຍ ໄພວັນ ສ້ອຍທອງ
ຮອງເລຂາໜ່ວຍພັກ ພວຕ, ມີຄະນະໜ່ວຍ ແລະ ສະມາຊິກພາຍໃນໜ່ວຍເຂົ້າຈໍານວນ 20 ສະຫາຍ, ຍິງ 5
ສະຫາຍ.
ສະຫາຍ ວິໄລເອກ ໄຊສະຫງວນ ໄດ້ຂຶ້ນຜ່ານ ຂໍ້ຕົກລົງ ຂອງຄະນະປະຈໍາຊາວໜຸ່ມ ປປລາວ ແຂວງ
ວ່າດ້ວຍການແຕ່ງຕັ້ງຄະນະໜ່ວຍ ຊາວໜຸ່ມຊຸດໃໝ່ ແລະ ໜ້າທີ່ຄວາມຮັບຜິດຊອບຂອງແຕ່ລະສະຫາຍ,
ເຊິ່ງປະກອບມີ 1. ສະຫາຍ ສົມບູນ ພັນທະນິດ ເປັນເລຂາໜ່ວຍ ຮັບຜິດຊອບວຽກງານຊີ້ນໍາລວມ, 2
ສະຫາຍ ນ. ຈັນທີ ສິດທິພອນ ເປັນຮອງເລຂາໜ່ວຍຮັບຜິດຊອບວຽກງານຕິດຕາມ, ກວດກາພາຍໃນໜ່ວຍ, 3
ສະຫາຍ ສົມພຸດ ທອງສະມຸດ ເປັນຮອງເລຂາໜ່ວຍ ຮັບຜິດຊອບວຽກງານເສດຖະກິດ ແລະ
ວຽກງານຂະບວນການ.
ຈາກນັ້ນກໍ່ໄດ້ຂຶ້ນຜ່ານບົດບັນທຶກວ່າດ້ວຍການມອບ-ຮັບ ໜ້າທີ່ ແລະ
ແຜນການຈັດຕັ້ງປະຕິບັດໃນຕໍ່ໜ້າ
ທີ່ຄະນະໜ່ວຍຊາວໜຸ່ມຊຸດໃໝ່ຈະຕ້ອງໄດ້ຈັດຕັ້ງນໍາພາເປັນຕົ້ນ
ວຽກງານແຂງຂັນຍ້ອງຍໍ່ຊາວໜຸ່ມ 4 ບຸກ, ວຽກງານການສ້າງຂະບວນການຕ່າງໆ ແລະ
ວຽກງານປີ່ນອ້ອມທຸກໆ ໜ້າວຽກໃຫ້ມີຄວາມໜັກແໜ້ນເຂັມແຂງຂຶ້ນກວ່າເກົ່າ ແລະ
ສ້າງໄດ້ຊາວໜຸ່ມຕົວແບບ 4 ບຸກທຸກໆປີ ຈາກນັ້ນກໍ່ໄດ້ເຊັນມອບ-ຮັບບົດບັນທຶກລະຫວ່າງ
ເລຂາໜ່ວຍຜູ້ເກົ່າ ແລະ ເລຂາໜ່ວຍຜູ້ໃໝ່.
ໃນພິທີດັ່ງກ່າວຍັງໄດ້ຮັບຟັງການໂອ້ລົມ ຂອງສະຫາຍ ໄພວັນ ສ້ອຍທອງ ຮອງເລຂາໜ່ວຍພັກພະແນກ
ວິທະຍາສາດ ແລະ ເຕັກໂນໂລຊີ, ເຊິ່ງສະຫາຍໄດ້ຍ້ອງຍໍ ແລະ
ຕີລາຄາສູງຕໍ່ຜົນສໍາເລັດທີ່ໜ່ວຍຊາວໜຸ່ມ ຂອງພວກເຮົາຍາດມາໄດ້ໃນໄລຍະຜ່ານມາ
 1 / 2

ໜ່ວຍຊາວໜຸ່ມ ພວຕ ແຂວງບໍ່ແກ້ວ ຈັດພິທີມອບ-ຮັບຄະນະເລຂາໜ່ວຍຊຸດໃໝ່
Written by Administrator
Thursday, 07 February 2019 01:44 - Last Updated Thursday, 07 February 2019 02:27
ເຊິ່ງສະແດງອອກໃນຫຼາຍໆ ດ້ານເປັນຕົົ້ນຄວາມສາມັກຄີເປັນຈິດໜຶ່ງໃຈດຽວກັນ,
ການເຂົ້າຮ່ວມຂະບວນການຕ່າງໆ ທີ່ທາງແຂວງ ແລະ ພະແນກຈັດຂຶ້ນ,
ການປະກອບສ່ວນຊ່ວຍເຫຼືອອື່ນໆ ນັ້ນກໍ່ເປັນຂາດໝາຍ ແລະ
ພວກເຮົາຈະຕ້ອງໄດ້ເອົາໃຈໃສ່ຮັກສາມູນເຊື້ອອັນດີງາມໄວ້ ແລະ
ຄະນະໜ່ວຍຊຸດໃໝ່ຈະຕ້ອງໄດ້ເພີ້ມທະວີສືບຕໍ່ຈັດຕັ້ງນໍາພາ
ຕາມແຜນການຊາວໜຸ່ມຊຸດເກົ່າໄດ້ວາງໄວ້ ໃຫ້ມີຜົນສໍາເລັດ ແລະ ດີຂຶນກວ່າເກົ່າ.
ຂ່າວ ແລະ ພາບໂດຍ: ປະກາສິດ ທໍາມະວົງ
 2 / 2